ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ສູນບໍລິຫານລັດດິຈິຕອນ

ເລກທີ.766.../ສລດ

ນະຄອນຫຼວງວຽງຈັນ, ວັນທີ 07 ສິງຫາ 2023

# ແຜນເຄື່ອນໄຫວ

ຈັດກອງປະຊຸມລະດົມແນວຄິດ ສຶກສາຄວາມເປັນໄປໄດ້ໃນການພັດທະນາຕົວແບບລວມ ລະບົບເຊື່ອມໂຍງຂໍ້ມູນ ເປີດພາກລັດ (Government Open Data Platform) ໃນວັນທີ 24 ສິງຫາ 2023 (ກຳນົດ 01 ມື້)

- ອີງຕາມ ອີງຕາມ ໜັງສືສະເໜີຂໍອະນຸມັດຈັດຕັ້ງປະຕິບັດ ແລະ ແຕ່ງຕັ້ງຄະນະຮັບຜິດຊອບຈັດຝຶກອົບຮົມ, ສະບັບເລກທີ........./ສລດ, ລົງວັນທີ.........ສິງຫາ 2023.
- ອີງຕາມ ແຜນພັດທະນາເສດຖະກິດດິຈິຕອນ ແຫ່ງຊາດ ໄລຍະ 5 ປີ (2021 – 2025).

## I. ສະພາບລວມ

ເພື່ອສ້າງການຫັນປ່ຽນໃນການຫັນເປັນທັນສະໄໝດ້ານດິຈິຕອນ ກໍ່ຄືຫັນເປັນລັດຖະບານດິຈິຕອນ ຢ່າງເປັນຮູບປະທຳນັ້ນແມ່ນມີຄວາມຈຳເປັນສ້າງ ແລະ ພັດທະນາຕົວແບບລວມ ລະບົບເຊື່ອມໂຍງຂໍ້ມູນເປີດພາກລັດ (Government Open Data Platform) ເພື່ອເຫັນໄດ້ເຖິງຄວາມສຳຄັນ ແລະ ຄວາມຈຳເປັນຂອງວຽກງານ ການພັດທະນາລະບົບໃນການຍົກລະດັບວຽກງານການບໍລິຫານ ແລະ ບໍລິການລັດ ໃຫ້ມີຄວາມທັນສະໄໝ ແລະ ຍັງມີຄວາມສອດຄ່ອງກັບແຜນພັດທະນາການຫັນເປັນດິຈິຕອນ, ການປັບປຸງ ແລະ ພັດທະນາຕົວແບບລວມ ລະບົບເຊື່ອມໂຍງຂໍ້ມູນເປີດພາກລັດ ຈະຊ່ວຍໃຫ້ພາກລັດໃຫ້ບໍລິການຂໍ້ມູນຂະແໜງການເປັນດິຈິຕອນ ໃຫ້ເສີມຂະຫຍາຍຫຼາຍຂຶ້ນກວ່າເກົ່າ ໂດຍສະເພາະການສ້າງຄວາມເຂັ້ມແຂງ ຂໍ້ມູນຂ່າວສານ ແລະ ຊັບພະຍາກອນດິຈິຕອນທີ່ມີຢູ່ ຂອງບັນດາຂະແໜງການສຳຄັນ ໄດ້ເປີດໃຫ້ສັງຄົມເອົາຖານຂໍ້ມູນເປີດພາກລັດ ຜ່ານພຣັດຟອມທີ່ສ້າງການມີສ່ວນຮ່ວມຂອງຂະແໜງການລັດ ໄດ້ເອົາໄປພັດທະນາຕໍ່ໃນວຽກງານຂອງຕົນ ເປັນຕົ້ນ ການພັດທະນາ API ເຊິ່ງຈະການເຂົ້າເຖິງຂໍ້ມູນຂ່າວສານຂອງພາກລັດທີ່ມີປະສິດທິພາບຫຼາຍຂຶ້ນ, ການເຊື່ອມໂຍງລະຫວ່າງການບໍລິການລະບົບອອນລາຍ ແລະ ແອບພິເຄຊັ້ນ. ສະນັ້ນ ຈຶ່ງມີຄວາມຈຳເປັນ ໃນການຈັດກອງປະຊຸມລະດົມແນວຄິດ ສຶກສາຄວາມເປັນໄປໄດ້ໃນການພັດທະນາຕົວແບບລວມ ລະບົບເຊື່ອມໂຍງຂໍ້ມູນເປີດພາກລັດ (Government Open Data Platform) ຮ່ວມກັບ ບັນດາບັນດາກະຊວງ ແລະ ອົງການທຽບເທົ່າອ້ອມຂ້າງ ໄດ້ເຂົ້າໃຈຢ່າງເລິກເຊິ່ງ ສາມາດນຳໃຊ້ລະບົບຂໍ້ມູນເປີດພາກລັດ, ໄດ້ມີການລິເລີ່ມນຳເອົາຖານຂໍ້ມູນເປີດຂອງຂະແໜງການຕົນ ເຜີຍແຜ່ໃນລະບົບຂໍ້ມູນເປີດພາກລັດ ພາຍໃຕ້ການຄຸ້ມຄອງຂອງຕົນ ແລະ ຍັງເປັນການສືບຕໍ່ການພົວພັນ ປຶກສາຫາລືແຜນການຮ່ວມມືໃນຕໍ່ໜ້າ.

## II. ຈຸດປະສົງ

- ເພື່ອປຶກສາຫາລື ແລກປ່ຽນບົດຮຽນ ປະກອບຄຳຄິດເຫັນ ໃສ່ວຽກງານການພັດທະນາ ລະບົບເຊື່ອມໂຍງຂໍ້ມູນເປີດພາກລັດ (Government Open Data Platform) ກໍ່ຄືປະກອບໃສ່ການພັດທະນາ ການຫັນເປັນທັນສະໄໝຂອງຂະແໜງການ ແລະ ວຽກງານການບໍລິຫານລັດດິຈິຕອນ.
- ເພື່ອສ້າງຄວາມເຂົ້າໃຈ ແລະ ຍົກລະດັບຄວາມຮັບຮູ້ ສະພາບການພັດທະນາການຫັນເປັນສະໄໝຂອງລັດຖະບານ, ການບໍລິຫານ ແລະ ການບໍລິການລັດຖະບານດິຈິຕອນ.

- ເພື່ອຍົກລະດັບວຽກງານການຄຸ້ມຄອງຖານຂໍ້ມູນດິຈິຕອນຂອງບັນດາຂະແໜງການຜ່ານອອນລາຍ, ວຽກງານການຫັນເປັນດິຈິຕອນ ແລະ ຍົກສູງການພົວພັນຮ່ວມມືໃນຕໍ່ໜ້າ ລະຫວ່າງບັນດາກະຊວງ ແລະ ອົງການທຽບເທົ່າອ້ອມຂ້າງ.

## III. ຜົນໄດ້ຮັບ

- ບຸກຄະລາກອນຂອງບັນດາກະຊວງ ແລະ ອົງການທຽບເທົ່າອ້ອມຂ້າງ ມີຄວາມເຂົ້າໃຈສູງຂຶ້ນ ແລະ ສາມາດນຳໃຊ້ ລະບົບເຊື່ອມໂຍງຂໍ້ມູນເປີດພາກລັດ (Government Open Data Platform) ແລະ ສ້າງຄວາມຮັບຮູ້, ຄວາມເຂົ້າໃຈຕໍ່ກັບການນຳໃຊ້ຂໍ້ມູນຂ່າວສານພາກລັດ ສູງຂຶ້ນ.
- ບັນດາພະນັກງານຈາກບັນດາກະຊວງ ແລະ ອົງການທຽບເທົ່າອ້ອມຂ້າງ ສາມາດນຳເອົາບົດຮຽນ ຄຳຄິດຄຳເຫັນຕໍ່ກັບການພັດທະນາ, ການຄົ້ນຄວ້າ, ປັບປຸງ ລະບົບເຊື່ອມໂຍງຂໍ້ມູນເປີດພາກລັດ ເພື່ອໄປຍົກລະດັບການພັດທະນາລະບົບ ການບໍລິຫານ ແລະ ບໍລິການດ້ານດິຈິຕອນຂອງຂະແໜງການຕົນ.
- ບັນດາພະນັກງານຈາກບັນດາກະຊວງ ແລະ ອົງການທຽບເທົ່າອ້ອມຂ້າງ ສາມາດຮູ້ໄດ້ເຖິງຄວາມສຳຄັນ ແລະ ເຂົ້າໃຈໃນປະສິດທິພາບຂອງການນຳໃຊ້ບັນດາລະບົບບໍລິຫານ ແລະ ບໍລິການແບບດິຈິຕອນ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ກະຊວງອ້ອມຂ້າງ ຫຼາຍກວ່າເກົ່າ.

## IV. ຂໍ້ມູນລາຍລະອຽດ

ກ. ຄະນະຮັບຜິດຊອບ:

| | |
|---|---|
| - ສູນບໍລິຫານລັດດິຈິຕອນ | ຈຳນວນ 6 ທ່ານ |

ຂ. ເປົ້າໝາຍຜູ້ເຂົ້າຮ່ວມ:

| | |
|---|---|
| - ພະນັກງານຈາກບັນດາກະຊວງ ແລະ ອົງການທຽບເທົ່າ | ຈຳນວນ 16 ທ່ານ |
| 1) ກະຊວງການຕ່າງປະເທດ | ຈຳນວນ 1 ທ່ານ |
| 2) ກະຊວງສຶກສາທິການ ແລະ ກິລາ | ຈຳນວນ 1 ທ່ານ |
| 3) ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ | ຈຳນວນ 1 ທ່ານ |
| 4) ກະຊວງແຜນການ ແລະ ການລົງທຶນ | ຈຳນວນ 1 ທ່ານ |
| 5) ກະຊວງກະສິກຳ ແລະ ປ່າໄມ້ | ຈຳນວນ 1 ທ່ານ |
| 6) ກະຊວງພະລັງງານ ແລະ ບໍ່ແຮ່ | ຈຳນວນ 1 ທ່ານ |
| 7) ກະຊວງການເງິນ | ຈຳນວນ 1 ທ່ານ |
| 8) ກະຊວງອຸດສະຫະກຳ ແລະ ການຄ້າ | ຈຳນວນ 1 ທ່ານ |
| 9) ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ຈຳນວນ 1 ທ່ານ |
| 10) ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ຈຳນວນ 1 ທ່ານ |
| 11) ກະຊວງຍຸຕິທຳ | ຈຳນວນ 1 ທ່ານ |
| 12) ກະຊວງສາທາລະນະສຸກ | ຈຳນວນ 1 ທ່ານ |
| 13) ກະຊວງປ້ອງກັນຄວາມສະຫງົບ | ຈຳນວນ 1 ທ່ານ |
| 14) ກະຊວງໂຍທາທິການ ແລະ ຂົນສົ່ງ | ຈຳນວນ 1 ທ່ານ |
| 15) ກະຊວງພາຍໃນ | ຈຳນວນ 1 ທ່ານ |
| 16) ຫ້ອງວ່າການລັດຖະບານ | ຈຳນວນ 1 ທ່ານ |

ຄ. ໄລຍະເວລາ

- ການຈັດກອງປະຊຸມ ແມ່ນໃນວັນທີ 24 ສິງຫາ 2023 (ກຳນົດ 01 ມື້) ຊຶ່ງມີລາຍລະອຽດດັ່ງນີ້:

| ລ/ດ | ວັນ ເດືອນ ປີ | ເນື້ອໃນ | ຜູ້ເຂົ້າຮ່ວມ |
|---|---|---|---|
| 1 | 24 ສິງຫາ 2023 | ກອງປະຊຸມລະດົມແນວຄິດ ສຶກສາຄວາມເປັນໄປໄດ້ໃນການພັດທະນາຕົວແບບລວມ ລະບົບເຊື່ອມໂຍງຂໍ້ມູນເປີດພາກລັດ (Government Open Data Platform) ມີລາຍລະອຽດຄື:<br>- ກ່າວເປີດກອງປະຊຸມ ແລະ ສະເໜີຈຸດປະສົງ.<br>- ນຳສະເໜີກ່ຽວກັບ ສະພາບການພັດທະນາລະບົບບໍລິຫານລັດດິຈິຕອນ.<br>- ນຳສະເໜີກ່ຽວກັບ ຄວາມສຳຄັນຂອງການພັດທະນາລະບົບເຊື່ອມໂຍງຂໍ້ມູນເປີດພາກລັດ ແລະ ແຜນການພັດທະນາຂອງປະເທດອ້ອມຂ້າງ ແລະ ສາກົນ.<br>- ນຳພາເຂົ້າໃຊ້ ລະບົບເຊື່ອມໂຍງຂໍ້ມູນເປີດພາກລັດຂອງລາວ ຜ່ານອອນລາຍ ແລະ ສິດເຂົ້າໃຊ້ລະບົບຂອງອົງການລັດ.<br>- ອະທິບາຍກ່ຽວກັບ ໂຄງປະກອບ ຂໍ້ມູນເປີດ datasets, organisation, metadata, API.<br>- ປະກອບຄຳຄິດເຫັນຂອງຜູ້ເຂົ້າຮ່ວມຈາກກະຊວງ ແລະ ອົງການທຽບເທົ່າ.<br>- ສະຫຼຸບສັງລວມຜົນ ແລະ ກ່າວປິດກອງປະຊຸມ. | ຄະນະຮັບຜິດຊອບ ແລະ ຜູ້ເຂົ້າຮ່ວມທັງໝົດ ຈາກ ກະຊວງ ແລະ ອົງການທຽບເທົ່າ. |

ງ. ງົບປະມານ.

- ສຳລັບງົບປະມານໃນການໃຊ້ຈ່າຍໃນການຈັດກອງປະຊຸມໃນຄັ້ງນີ້ ແມ່ນນຳໃຊ້ງົບປະມານ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

ຈ. ວິທີຈັດຕັ້ງປະຕິບັດ

1. ໄລຍະກະກຽມຮ່າງແຜນການເຄື່ອນໄຫວ, ແບ່ງຄວາມຮັບຜິດຊອບ, ປະສານງານພາກສ່ວນທີ່ກ່ຽວຂ້ອງ, ແລະ ກະກຽມເອກະສານສຳລັບຮັບໃຊ້ໃນການກອງປະຊຸມໃນຄັ້ງນີ້.
2. ຈັດກອງປະຊຸມສຶກສາຄວາມເປັນໄປໄດ້ໃນການພັດທະນາຕົວແບບລວມ ລະບົບເຊື່ອມໂຍງຂໍ້ມູນເປີດພາກລັດ (Government Open Data Platform) ຮ່ວມກັບກະຊວງ ແລະ ອົງການທຽບເທົ່າອ້ອມຂ້າງ.
3. ສະຫຼຸບຜົນໄດ້ຮັບຂອງການຈັດກອງປະຊຸມ ລາຍງານຫາຄະນະນຳ ກະຊວງ ຕສ ເພື່ອຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ ແລະ ສະເໜີຕໍ່ຄະນະນຳກະຊວງ ເພື່ອພິຈາລະນາຮັບຮອງລົງລາຍເຊັນ.

ຫົວໜ້າສູນ — ຜູ້ຂຶ້ນແຜນ

ປອ. ທະວີສັກ ມະໂນທັມ — ຈາລຸດາ ຫລວງລາດ